ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ໄປສະນີ

ໂທລະຄົມມະນາຄົມ ແລະ ການສື່ສານ

2744

ເລກທີ:............/ປທສ

ນະຄອນຫຼວງວຽງຈັນ, ວັນທີ 15 SEP 2016

# ຂໍ້ຕົກລົງ
# ວ່າດ້ວຍການກຳນົດອັດຕາຄ່າໂທລະສັບ, ອິນເຕີເນັດ ແລະ ຫຼັກການສົ່ງເສີມການຂາຍ

- ອີງຕາມ ກົດໝາຍວ່າດ້ວຍ ການໂທລະຄົມມະນາຄົມ (ສະບັບປັບປຸງ), ສະບັບເລກທີ 09/ສພຊ, ລົງວັນ 21 ທັນວາ 2011;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ, ສະບັບເລກທີ 303/ນຍ, ລົງວັນທີ 26 ກັນຍາ 2011;
- ອີງຕາມ ການຄົ້ນຄ້ວາ ແລະ ສະເໜີຂອງ ກົມໂທລະຄົມມະນາຄົມ, ສະບັບເລກທີ..751../ປທສ.ກທຄ, ລົງວັນທີ 01/07/2016

## ລັດຖະມົນຕີ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ
## ອອກຂໍ້ຕົກລົງ:

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ, ໃນການກຳນົດອັດຕາຄ່າໂທລະສັບ, ອິນເຕີເນັດ ແລະ ຫຼັກການສົ່ງເສີມການຂາຍ ເພື່ອຮັບປະກັນໃຫ້ການບໍລິການດ້ານໂທລະສັບ ແລະ ອິນເຕີເນັດໄດ້ຮັບການຈັດຕັ້ງປະຕິບັດຢ່າງເປັນເອກະພາບ, ຖືກຕ້ອງ ແລະ ຊຸກຍູ້ສົ່ງເສີມການບໍລິການໂທລະສັບ ແລະ ອິນເຕີເນັດໃຫ້ມີປະສິດທິພາບ, ປະສິດທິຜົນສູງ ແນ່ໃສ່ຮັບປະກັນການແຂ່ງຂັນທີ່ເປັນທຳ, ມີຄວາມໂປ່ງໃສ, ປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງຜູ້ໃຊ້ບໍລິການທົ່ວປວງຊົນ ແລະ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດແຫ່ງຊາດ.

**ມາດຕາ 2. ການກຳນົດອັດຕາຄ່າໂທລະສັບ, ອິນເຕີເນັດ ແລະ ຫຼັກການສົ່ງເສີມການຂາຍ**

ການກຳນົດອັດຕາຄ່າໂທລະສັບ, ຄ່າອິນເຕີເນັດ ແລະ ຫຼັກການສົ່ງເສີມການຂາຍບໍລິການໂທລະຄົມ ແມ່ນການກຳນົດບັນດາອັດຕາຄ່າໂທລະສັບ, ຄ່າອິນເຕີເນັດ, ຄ່າເຊົ່າ, ຄ່າເຊື່ອມຕໍ່ເຄືອຂ່າຍ, ຄ່າທາງຜ່ານສູນອິນເຕີເນັດ

ແຫ່ງຊາດ (ສອຊ) ພາຍໃນປະເທດ, ການຂາຍຊິມເລກໝາຍ, ໃບບັດ ແລະ ບັດຕື່ມມູນຄ່າໂທ, ຫຼັກການ ສົ່ງເສີມການຂາຍ,ການໂຄສະນາ ແລະ ກຳນົດເວລາສົ່ງເສີມການຂາຍບໍລິການໂທລະຄົມມະນາຄົມ ເພື່ອໃຫ້ ສອດຄ່ອງກັບແຜນພັດທະນາເສດຖະກິດແຫ່ງຊາດ ແລະ ແຜນການດຳເນີນທຸລະກິດດ້ານ ໂທລະຄົມມະນາຄົມ, ຢ່າງສະເໝີພາບ, ເປັນທຳ ແລະ ບົນພື້ນຖານການປົກປ້ອງສິດຜົນປະໂຫຍດ ຂອງຜູ້ໃຊ້ບໍລິການ, ພ້ອມທັງ ຮັບປະກັນການເກັບລາຍຮັບເຂົ້າຄັງເງິນແຫ່ງຊາດຢ່າງຖືກຕ້ອງ, ຄົບຖ້ວນ ແລະ ເປັນປົກກະຕິ.

**ມາດຕາ 3. ອະທິບາຍຄຳສັບ**

**ຄຳສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ມີຄວາມໝາຍດັ່ງນີ້:**

**ການບໍລິການ:** ໝາຍເຖິງການບໍລິການໂທລະສັບ ຫຼື ອິນເຕີເນັດໃດໜຶ່ງ, ຊຶ່ງອາດມີບໍລິການດຽວ ຫຼື ລວມສອງບໍລິການຂຶ້ນໄປເປັນແພັກເກັດ (package) ເຊັ່ນ: ສຽງ, ຂໍ້ຄວາມສັ້ນ, ອິນເຕີເນັດ ແລະ ການບໍລິການເສີມອື່ນໆ;

**ການບໍລິການເສີມ:** ໝາຍເຖິງການບໍລິການເພີ່ມຕື່ມນອກຈາກການບໍລິການດ້ານສຽງ ແລະ ຂໍ້ມູນເຊັ່ນ: ການບໍລິການອ່ານຂ່າວເທິງມືຖື, ບໍລິການສຽງເພງລໍສາຍ, ບໍລິການເມົາຕີມີເດຍ ແລະ ອື່ນໆ;

**ອັດຕາຄ່າໂທລະສັບ ແລະ ອິນເຕີເນັດ:** ໝາຍເຖິງຄ່າການໃຊ້ບໍລິການໂທລະສັບ ແລະ ອິນເຕີເນັດ ທີ່ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ເກັບຈາກຜູ້ໃຊ້ບໍລິການ;

**ຄ່າເຊົ່າ:** ໝາຍເຖິງຄ່າຄຸ້ມຄອງບຳລຸງຮັກສາທີ່ຜູ້ໃຊ້ບໍລິການຕ້ອງຊຳລະໃຫ້ຜູ້ໃຫ້ບໍລິການໃນຈຳນວນເງິນໃດໜຶ່ງເປັນລາຍເດືອນ;

**ຄ່າເຊື່ອມຕໍ່ເຄືອຂ່າຍ:** ໝາຍເຖິງຄ່າເຊື່ອມຕໍ່ລະຫວ່າງ ບັນດາບໍລິສັດ ຜູ້ທີ່ໃຫ້ບໍລິການໂທລະຄົມະນາຄົມພາຍໃນດ້ວຍກັນເອງ ຫຼື ລະຫວ່າງ ສອຊ ແລະ ເຄືອຂ່າຍພາຍໃນປະເທດ;

**ຄ່າທາງຜ່ານ ສອຊ:** ໝາຍເຖິງການເກັບຄ່າຄຸ້ມຄອງບຳລຸງຮັກສາໃນການໃຫ້ບໍລິການດ້ານໂທລະຄົມມະນາຄົມ, ໂທລະສັບ, ອິນເຕີເນັດ ແລະ ອື່ນໆ ທີ່ເອົາມາຜ່ານ ສອຊ ຫາບັນດາເຄືອຂ່າຍໂທລະຄົມມະນາຄົມພາຍໃນປະເທດ, ຊຶ່ງການເກັບອັດຕາຄ່າທາງຜ່ານແມ່ນ ສອຊ ຈະເກັບຈາກບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ໃຫ້ບໍລິການ ແລະ ຜູ້ທີ່ມີໃບອະນຸຍາດປະກອບກິດຈະການທາງດ້ານໂທລະຄົມມະນາຄົມ, ໂທລະສັບ, ອິນເຕີເນັດ ແລະ ອື່ນໆ;

**ສອຊ:** ໝາຍເຖິງ ສູນອິນເຕີເນັດ ແຫ່ງຊາດ;

**ຊິມເລກໝາຍ:** ໝາຍເຖິງຊິມກາດ ( SIM card) ໂທລະສັບມືຖື, ໂທລະສັບຕັ້ງໂຕະບໍ່ມີສາຍ ແລະ ອຸປະກອນສື່ສານອື່ນທີ່ບັນຈຸເລກໝາຍ ແລະ ຂໍ້ມູນຂອງຜູ້ໃຊ້ບໍລິການ ຊຶ່ງຕ້ອງໄດ້ລົງທະບຽນກ່ອນເປີດນຳໃຊ້;

**ຊິມໂທ:** ໝາຍເຖິງຊິມເລກໝາຍ ທີ່ເນັ້ນເພື່ອໃຊ້ບໍລິການໂທເປັນຫຼັກ, ສ່ວນບໍລິການອື່ນ ແມ່ນເປັນສຳຮອງເຊັ່ນ: ບໍລິການອິນເຕີເນັດ, ບໍລິການເສີມ ອື່ນໆ;

**ຊິມເນັດ:** ໝາຍເຖິງຊິມເລກໝາຍ ທີ່ເນັ້ນເພື່ອໃຊ້ບໍລິການອິນເຕີເນັດເປັນຫຼັກ, ສ່ວນບໍລິການອື່ນ ແມ່ນໃຊ້ເປັນສຳຮອງ ເຊັ່ນ: ສົ່ງ-ຮັບຂໍ້ຄວາມສັ້ນ ແລະ ບໍລິການເສີມອື່ນ;

**ໂທລະສັບຕັ້ງໂຕະມີສາຍ:** ໝາຍເຖິງປະເພດໂທລະສັບທີ່ ສົ່ງ-ຮັບ ສັນຍານຜ່ານສາຍທອງແດງ ຫຼື ສາຍໃຍແກ້ວນຳແສງ (Fiber Optic) ໂດຍການຕິດຕັ້ງນຳໃຊ້ແບບຄົງທີ່ຢູ່ ຕາມບ້ານເຮືອນ ແລະ ສຳນັກງານ ຫ້ອງການ;

**ໂທລະສັບຕັ້ງໂຕະບໍ່ມີສາຍ:** ໝາຍເຖິງປະເພດໂທລະສັບທີ່ ສົ່ງ-ຮັບ ສັນຍານດ້ວຍຄື້ນຄວາມຖີ່ທີ່ຄ້າຍຄືລະບົບໂທລະສັບມືຖືນຳໃຊ້ໄດ້ ໃນຂອບເຂດຈຳກັດ;

**ໂທລະສັບມືຖືແບບລາຍເດືອນ (Post-Paid):** ໝາຍເຖິງປະເພດໂທລະສັບມືຖືທີ່ຜູ້ໃຊ້ບໍລິການລົງທະບຽນຢ່າງຖືກຕ້ອງ, ຊຳລະຄ່າເຊົ່າປະຈຳເດືອນ ແລະ ອັດຕາຄ່າໂທລະສັບເປັນລາຍເດືອນ;

**ໂທລະສັບມືຖືແບບຕື່ມເງິນ (Pre-Paid):** ໝາຍເຖິງໂທລະສັບມືຖືທີ່ຜູ້ໃຊ້ບໍລິການລົງທະບຽນຢ່າງຖືກຕ້ອງ ແລະ ຊຳລະອັດຕາຄ່າໂທລະສັບລ່ວງໜ້າດ້ວຍການຕື່ມມູນຄ່າໂທກ່ອນຈຶ່ງສາມາດນຳໃຊ້ໄດ້;

**ໃບບິນ:** ໝາຍເຖິງເວລາການໂທ, ມູນຄ່າໂທ, ຈຳນວນຂໍ້ມູນ ແລະ ຈຳນວນຂໍ້ຄວາມສັ້ນທີ່ຜູ້ໃຫ້ບໍລິການໃຫ້ເປັນຂອງຂວັນແກ່ຜູ້ໃຊ້ບໍລິການ;

**ບໍລິການອິນເຕີເນັດຜ່ານລະບົບໂທລະສັບມືຖື:** ໝາຍເຖິງການເຊື່ອມຕໍ່ອິນເຕີເນັດດ້ວຍໂທລະສັບມືຖື ຫຼື ອຸປະກອນສື່ສານອື່ນເຂົ້າກັບເຄືອຂ່າຍໂທລະຄົມມະນາຄົມຂອງຜູ້ໃຫ້ບໍລິການ;

**ບໍລິການອິນເຕີເນັດມີສາຍ (Wired Internet):** ໝາຍເຖິງການໃຫ້ບໍລິການອິນເຕີເນັດແກ່ຜູ້ໃຊ້ບໍລິການຜ່ານຄູ່ສາຍໂທລະສັບ (xDSL) ແລະ ສາຍໃຍແກ້ວນຳແສງ (FTTx) ເປັນຕົ້ນ ເພື່ອໃຫ້ຜູ້ໃຊ້ບໍລິການສາມາດເຊື່ອມຕໍ່ອິນເຕີເນັດໄດ້;

**ບໍລິການອິນເຕີເນັດບໍ່ມີສາຍ (Wireless Internet):** ໝາຍເຖິງການໃຫ້ບໍລິການອິນເຕີເນັດແກ່ຜູ້ໃຊ້ບໍລິການຜ່ານເຄືອຂ່າຍສື່ສານບໍ່ມີສາຍເຊັ່ນ: WiFi ແລະ WiMax ເປັນຕົ້ນ ເພື່ອໃຫ້ຜູ້ໃຊ້ບໍລິການສາມາດເຊື່ອມຕໍ່ອິນເຕີເນັດໄດ້;

**ວົງຈອນເຊົ່າອິນເຕີເນັດ (Leased Line):** ໝາຍເຖິງ ການໃຫ້ບໍລິການອິນເຕີເນັດແກ່ຜູ້ໃຊ້ບໍລິການຜ່ານສາຍສົ່ງໂດຍກົງ ຊຶ່ງໃຊ້ສາຍໃຍແກ້ວນຳແສງ( Fiber Optic) ເປັນຕົ້ນ ເພື່ອໃຫ້ຜູ້ໃຊ້ບໍລິການສາມາດເຊື່ອມຕໍ່ ອິນເຕີເນັດໄດ້.

**ມາດຕາ 4. ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບຜູ້ໃຫ້ບໍລິການ ແລະ ຜູ້ໃຊ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດໃນຂອບເຂດທົ່ວປະເທດ.

## ໝວດທີ II

## ອັດຕາຄ່າເຊົ່າ, ຄ່າໂທລະສັບ, ຄ່າອິນເຕີເນັດ, ຄ່າເຊື່ອມຕໍ່ເຄືອຂ່າຍ ແລະ ຄ່າຜ່ານ ສອຊ

### ມາດຕາ 5. ອັດຕາຄ່າເຊົ່າໂທລະສັບ ແລະ ອິນເຕີເນັດ

#### 5.1 ອັດຕາຄ່າເຊົ່າການບໍລິການໂທລະສັບ

| ລ/ດ | ປະເພດ | ອັດຕາ |
|---|---|---|
| 1 | ໂທລະສັບຕັ້ງໂຕະມີສາຍ | 15 000 ກີບ/ເດືອນ |
| 2 | ໂທລະສັບຕັ້ງໂຕະບໍ່ມີສາຍ | 0 ກີບ/ເດືອນ |
| 3 | ໂທລະສັບມືຖືແບບລາຍເດືອນ | 25 000 ກີບ/ເດືອນ |
| 4 | ໂທລະສັບມືຖືແບບຕື່ມເງິນ | 0 ກີບ/ເດືອນ |

#### 5.2 ອັດຕາຄ່າເຊົ່າເລກໝາຍອິນເຕີເນັດ (IP)

| ລ/ດ | ປະເພດ | ຈຳນວນເລກໝາຍອິນເຕີເນັດ (IP) | ພີຣຟິກສ(Prefix) | ອັດຕາ |
|---|---|---|---|---|
| 1 | IPv4 | 1 - 4 | /30 | 40 000 ກີບ/IP/ເດືອນ |
| 2 | | 5 - 16 | /28 | 35 000 ກີບ/IP/ເດືອນ |
| 3 | | 17 - 32 | /27 | 30 000 ກີບ/IP/ເດືອນ |
| 4 | | 33 - 64 | /26 | 25 000 ກີບ/IP/ເດືອນ |
| 5 | | 65 - 256 | /24 | 20 000 ກີບ/IP/ເດືອນ |
| 6 | | 257 - 1024 | /22 | 18 000 ກີບ/IP/ເດືອນ |
| 7 | | ຫຼາຍກວ່າ 1024 | | 15 000 ກີບ/IP/ເດືອນ |
| 8 | IPv6 | 1 - 1.024 | /64 | 2 500 ກີບ/IP/ເດືອນ |
| 9 | | 1.025 - 2.048 | /65 | 2 000 ກີບ/IP/ເດືອນ |
| 10 | | 2.049 - 4.096 | /66 | 1 800 ກີບ/IP/ເດືອນ |
| 11 | | 4.097 - 16K | /60 | 1 600 ກີບ/IP/ເດືອນ |
| 12 | | 16K - 32K | /69 | 1 400 ກີບ/IP/ເດືອນ |
| 13 | | 32K - 128K | /57 | 1 200 ກີບ/IP/ເດືອນ |
| 14 | | 128K - 512K | /55 | 1 000 ກີບ/IP/ເດືອນ |
| 15 | | ຫຼາຍກວ່າ 512K | | 800 ກີບ/IP/ເດືອນ |

**ມາດຕາ 6. ອັດຕາຄ່າໂທລະສັບ ແລະ ຂໍ້ຄວາມສັ້ນ ພາຍໃນ ແລະ ຕ່າງປະເທດ**

**6.1 ອັດຕາຄ່າໂທລະສັບ ແລະ ຂໍ້ຄວາມສັ້ນ ພາຍໃນເຄືອຂ່າຍ ແລະ ຂ້າມເຄືອຂ່າຍພາຍໃນປະເທດ:**

| ລ/ດ | ປະເພດ | ອັດຕາ<br>ພາຍໃນເຄືອຂ່າຍ | ອັດຕາ<br>ຂ້າມເຄືອຂ່າຍ | ໝາຍເຫດ |
|---|---|---|---|---|
| 1 | ໂທລະສັບຕັ້ງໂຕະ | 250 ກີບ/ນາທີ | 250 ກີບ/ນາທີ | ໃຫ້ຄິດໄລ່ເປັນ ກີບ/ວິນາທີ ຕາມການນຳໃຊ້ ຕົວຈິງ |
| 2 | ໂທລະສັບຕັ້ງໂຕະບໍ່ມີສາຍ | 250 ກີບ/ນາທີ | 250 ກີບ/ນາທີ | |
| 3 | ໂທລະສັບມືຖືແບບລາຍເດືອນ | 300 ກີບ/ນາທີ | 300 ກີບ/ນາທີ | |
| 4 | ໂທລະສັບມືຖືແບບຕື່ມເງິນ | 750 ກີບ/ນາທີ | 750 ກີບ/ນາທີ | |
| 5 | ຂໍ້ຄວາມສັ້ນ | 100 ກີບ/ຄັ້ງ | 100 ກີບ/ຄັ້ງ | |

**6.2 ອັດຕາຄ່າບໍລິການໂທລະສັບ ແລະ ຂໍ້ຄວາມສັ້ນ ໄປຕ່າງປະເທດ**

| ລ/ດ | ປະເພດ | ອັດຕາ |
|---|---|---|
| 1 | ໂທລະສັບຕັ້ງໂຕະ | ລາຄາເລີ່ມຕົ້ນ 1600 ກີບ/ນາທີ<br>+ ຄ່າສ່ວນແບ່ງ ຕ່າງປະເທດຕາມເຂດ |
| 2 | ໂທລະສັບຕັ້ງໂຕະບໍ່ມີສາຍ | |
| 3 | ໂທລະສັບມືຖືແບບລາຍເດືອນ | |
| 4 | ໂທລະສັບມືຖືແບບຕື່ມເງິນ | |
| 5 | ຂໍ້ຄວາມສັ້ນ | ລາຄາເລີ່ມຕົ້ນ 500 ກີບ/ຄັ້ງ |

**ມາດຕາ 7. ອັດຕາຄ່າອິນເຕີເນັດ**

**7.1 ອັດຕາຄ່າອິນເຕີເນັດຜ່ານລະບົບໂທລະສັບມືຖື**

| ລ/ດ | ປະເພດ | ອັດຕາ |
|---|---|---|
| 1 | ການນຳໃຊ້ອິນເຕີເນັດຜ່ານລະບົບໂທລະສັບມືຖື | 150 ກີບ/MB |
| 2 | ການນຳໃຊ້ອິນເຕີເນັດຜ່ານລະບົບໂທລະສັບມືຖື ໃນຮູບແບບແພັກເກັດ (package) | |
| 2.1 | ຜ່ານຊິມໂທລາຄາຕ່ຳສຸດ | 40 ກີບ/MB |
| 2.2 | ຜ່ານຊິມເນັດ | 30 ກີບ/MB |
| 2.3 | ແບບຈຳກັດຄວາມໄວ | |
| | 128 kbps | ລາຄາ 5000 ກີບ/ວັນ |

**7.2 ອັດຕາຄ່າອິນເຕີເນັດບໍ່ມີສາຍ (Wireless Internet)**

ອັດຕາຄ່າອິນເຕີເນັດບໍ່ມີສາຍແບ່ງອອກເປັນ 2 ສ່ວນຄື: ຄ່າຕິດຕັ້ງ ແລະ ຄ່າບໍລິການອິນເຕີເນັດ.

- ຄ່າຕິດຕັ້ງ ແລະ ອຸປະກອນເຊື່ອມຕໍ່ ໄດ້ກຳນົດໄວ້ຢູ່ໃນລະບຽບການສະເພາະຂອງຜູ້ໃຫ້ບໍລິການ. ອັດຕາຄ່າອິນເຕີເນັດບໍ່ມີສາຍ ກຳນົດຕາມຕາຕະລາງລຸ່ມນີ້:

| ລ/ດ | ປະເພດ | ອັດຕາ |
|---|---|---|
| 1 | ການນຳໃຊ້ອິນເຕີເນັດບໍ່ມີສາຍ | 30 ກີບ/MB |
| 2 | ການນຳໃຊ້ອິນເຕີເນັດບໍ່ມີສາຍ ໃນຮູບແບບແພັກເກັດ (package) | |
| 2.1 | ແບບຈຳກັດຄວາມໄວ (ບໍ່ຈຳກັດຂໍ້ມູນ). | |
| | ຄວາມໄວ 512 kbps | 3000 ກີບ/ວັນ |
| | ຄວາມໄວ 1 Mbps | 5000 ກີບ/ວັນ |
| | ຄວາມໄວ 2 Mbps | 8000 ກີບ/ວັນ |
| | ຄວາມໄວ 3 Mbps ຂຶ້ນໄປ | 4000 ກີບ/Mbps/ວັນ |
| 2.2 | ແບບຈຳກັດຂໍ້ມູນ (ບໍ່ຈຳກັດຄວາມໄວ) | 10 ກີບ/MB |

### 7.3 ອັດຕາຄ່າອິນເຕີເນັດມີສາຍ (Wired Internet)

ອັດຕາຄ່າອິນເຕີເນັດມີສາຍແບ່ງອອກເປັນ 2 ສ່ວນຄື: ຄ່າຕິດຕັ້ງ ແລະ ຄ່າບໍລິການອິນເຕີເນັດ.

- ຄ່າຕິດຕັ້ງ ແລະ ອຸປະກອນເຊື່ອມຕໍ່ ໄດ້ກຳນົດໄວ້ຢູ່ໃນລະບຽບການສະເພາະຂອງຜູ້ໃຫ້ບໍລິການ.
- ອັດຕາຄ່າອິນເຕີເນັດມີສາຍ ກຳນົດຕາມຕາຕະລາງລຸ່ມນີ້:

| ລ/ດ | ປະເພດ | ອັດຕາ |
|---|---|---|
| 1 | ຄວາມໄວ 512 Kbps | 130 000 ກີບ/ເດືອນ |
| 2 | ຄວາມໄວ 1 Mbps | 200 000 ກີບ/ເດືອນ |
| 3 | ຄວາມໄວ 2 Mbps | 350 000 ກີບ/ເດືອນ |
| 4 | ຄວາມໄວ 3 Mbps ຂຶ້ນໄປ | 120 000 ກີບ/Mbps/ເດືອນ |

### 7.4 ອັດຕາຄ່າບໍລິການວົງຈອນເຊົ່າອິນເຕີເນັດ (Leased Line)

ສຳລັບຄ່າຕິດຕັ້ງ, ອຸປະກອນເຊື່ອມຕໍ່ ແລະ ອັດຕາຄ່າບໍລິການວົງຈອນເຊົ່າອິນເຕີເນັດ ໄດ້ກຳນົດໄວ້ຢູ່ໃນລະບຽບການສະເພາະຂອງຜູ້ໃຫ້ບໍລິການ.

## ມາດຕາ 8. ອັດຕາຄ່າທາງຜ່ານສູນອິນເຕີເນັດ ແຫ່ງຊາດ ແລະ ຄ່າເຊື່ອມຕໍ່ເຄືອຂ່າຍພາຍໃນປະເທດ

| ລ/ດ | ປະເພດ | ອັດຕາ ຄ່າຜ່ານ ສອຊ | ອັດຕາ ຄ່າເຊື່ອມຕໍ່ເຄືອຂ່າຍ |
|---|---|---|---|
| 1 | ໂທລະສັບຕັ້ງໂຕະ | 5 ກີບ/ນາທີ | 100 ກີບ/ນາທີ |
| 2 | ໂທລະສັບຕັ້ງໂຕະບໍ່ມີສາຍ | 5 ກີບ/ນາທີ | 100 ກີບ/ນາທີ |
| 3 | ໂທລະສັບມືຖືແບບລາຍເດືອນ | 5 ກີບ/ນາທີ | 100 ກີບ/ນາທີ |
| 4 | ໂທລະສັບມືຖືແບບຕື່ມເງິນ | 5 ກີບ/ນາທີ | 100 ກີບ/ນາທີ |
| 5 | ຂໍ້ຄວາມສັ້ນ | 5 ກີບ/ຄັ້ງ | 50 ກີບ/ຄັ້ງ |

## ໝວດທີ III
## ການຂາຍຊິມເລກໝາຍ, ໂບນັດ ແລະ ບັດຕື່ມມູນຄ່າໂທ

### ມາດຕາ 9. ການໃຫ້ລາງວັນ ( Bonus) ໃນການຂາຍເລກໝາຍໂທລະສັບ

ຄ່າເລກໝາຍໂທລະສັບຕໍ່າສຸດ 10,000 ກີບ ຕໍ່ເລກໝາຍ ແລະ ສາມາດໃຫ້ລາງວັນ (ໂບນັດ) ແກ່ຜູ້ຊົມໃຊ້ໄດ້ ເປັນເວລາການໂທ, ມູນຄ່າໂທ, ຈໍານວນຂໍ້ມູນ ແລະ ຈໍານວນຂໍ້ຄວາມສັ້ນພຽງຄັ້ງດຽວຕໍ່ເລກໝາຍ. ການຕັ້ງລາງວັນດ້ວຍຮູບການໃຫ້ລາງວັນ (ໂບນັດ) ບໍ່ສາມາດສະສົມໄດ້, ລາຍລະອຽດດັ່ງຕາຕະລາງ ລຸ່ມນີ້:

| ລ/ດ | ປະເພດລາງວັນ | ຈໍານວນ(ບໍ່ເກີນ) | ຫົວໜ່ວຍ(ຕໍ່ເລກໝາຍ) |
|---|---|---|---|
| 1. | ໂທລະສັບມືຖື | | |
| 1.1 | ເວລາການໂທ | 10 | ນາທີ |
| 1.2 | ມູນຄ່າໂທ | 5,000 | ກີບ |
| 1.3 | ຂໍ້ມູນ | 300 | MB |
| 1.4 | ຂໍ້ຄວາມສັ້ນພາຍໃນປະເທດ | 10 | ສະບັບ |
| 1.5 | ຂໍ້ຄວາມສັ້ນຕ່າງປະເທດ | 5 | ສະບັບ |
| 2 | ໂທລະສັບຕັ້ງໂຕະບໍ່ມີສາຍ | | |
| 2.1 | ເວລາການໂທ | 20 | ນາທີ |
| 2.2 | ມູນຄ່າໂທ | 5,000 | ກີບ |
| 2.3 | ຂໍ້ຄວາມສັ້ນພາຍໃນປະເທດ | 10 | ສະບັບ |
| 2.4 | ຂໍ້ຄວາມສັ້ນຕ່າງປະເທດ | 5 | ສະບັບ |

### ມາດຕາ 10. ສ່ວນຫຼຸດຄ່າຊິມເລກໝາຍ ແລະ ຂາຍບັດຕື່ມມູນຄ່າໂທ

#### 10.1 ສ່ວນຫຼຸດໃນການຂາຍບັດຕື່ມມູນຄ່າໂທ

| ລ/ດ | ມູນຄ່າການຊື້/ຄັ້ງ | ສ່ວນຫຼຸດສູງສຸດ(ເປີເຊັນ) |
|---|---|---|
| 1 | ແຕ່ 100 000 ຫາ 9 999 999 ກີບ | 8% |
| 2 | ແຕ່ 10 000 000 ຫາ 99 999 9999 ກີບ | 8.5% |
| 3 | 100 000 000 ກີບຂຶ້ນໄປ | 9% |

#### 10.2 ສ່ວນຫຼຸດໃນການຂາຍເລກໝາຍ

| ລ/ດ | ຈໍານວນເລກໝາຍທີ່ຊື້/ຄັ້ງ | ລາຄາຕໍ່າສຸດ/ເລກໝາຍ |
|---|---|---|
| 1 | ແຕ່ 2 ຫາ 9 ເລກໝາຍ | 10 000 |
| 2 | ແຕ່ 10 ຫາ 99 ເລກໝາຍ | 8 500 |

| | | |
|---|---|---|
| 3 | ແຕ່ 100 ຫາ 999 ເລກໝາຍ | 8 000 |
| 4 | ແຕ່ 1 000 ຫາ 9 999 ເລກໝາຍ | 7 500 |
| 5 | 10 000 ເລກໝາຍຂຶ້ນໄປ | 7 000 |

## ໝວດທີ IV
## ຫຼັກການ ແລະ ຮູບແບບສົ່ງເສີມການຂາຍ

### ມາດຕາ 11. ຫຼັກການສົ່ງເສີມການຂາຍ

ຫຼັກການສົ່ງເສີມການຂາຍປະກອບມີ ສີ່ ຮູບແບບຄື:

1. ຮູບແບບສົ່ງເສີມການຂາຍການບໍລິການໂທລະສັບ, ສົ່ງຂໍ້ຄວາມ ແລະ ອິນເຕີເນັດ;
2. ຮູບແບບສົ່ງເສີມການຂາຍແບບແພັກເກັດ (package) ແລະ ແຖມວັດຖຸສິ່ງຂອງ;
3. ຮູບແບບສົ່ງເສີມການຂາຍທີ່ມີການແຈກຂອງລາງວັນເປັນວັດຖຸສິ່ງຂອງ;
4. ຮູບແບບສົ່ງເສີມການຂາຍປະເພດບໍລິການຜະລິດຕະພັນໃໝ່.

### ມາດຕາ 12. ຮູບແບບສົ່ງເສີມການຂາຍການບໍລິການໂທລະສັບ, ສົ່ງຂໍ້ຄວາມ ແລະ ອິນເຕີເນັດ

ການຈັດສົ່ງເສີມການຂາຍບໍລິການໂທລະສັບ, ສົ່ງຂໍ້ຄວາມສັ້ນ ແລະ ອິນເຕີເນັດ ສາມາດຈັດໄດ້ຫຼັງຈາກໝົດໄລຍະລາງວັນ (ໂບນັດ) ຂອງການລົງທະບຽນນຳໃຊ້ຊິມເລກໝາຍໂທລະສັບ ແມ່ນສາມາດຫຼຸດຄ່າບໍລິການໄດ້ສູງສຸດ ບໍ່ເກີນ 15% ຂອງອັດຕາຄ່າໂທລະສັບ, 5% ຂອງອັດຕາຄ່າຂໍ້ຄວາມສັ້ນ ແລະ 3% ຂອງອັດຕາຄ່າອິນເຕີເນັດ ຂອງຂໍ້ຕົກລົງສະບັບນີ້.

### ມາດຕາ 13. ຮູບແບບສົ່ງເສີມການຂາຍແບບແພັກເກັດ (package) ແລະ ແຖມວັດຖຸສິ່ງຂອງ

ຮູບແບບການສົ່ງເສີມການຂາຍແບບແພັກເກັດ (package) ທີ່ ລວມຫຼາຍບໍລິການ ແລະ ແຖມວັດຖຸສິ່ງຂອງ ແມ່ນສາມາດຫຼຸດຄ່າບໍລິການໄດ້ຕາມມາດຕາ 12 ຂອງຂໍ້ຕົກລົງສະບັບນີ້ ແລະ ບໍ່ໃຫ້ຂາຍວັດຖຸສິ່ງຂອງຕໍ່າກ່ວາລາຄາຕົ້ນທຶນທີ່ຊື້ມາ.

### ມາດຕາ 14. ຮູບແບບສົ່ງເສີມການຂາຍທີ່ມີການແຈກຂອງລາງວັນເປັນວັດຖຸສິ່ງຂອງ

ຮູບແບບການຈັດສົ່ງເສີມການຂາຍທີ່ມີການແຈກຂອງລາງວັນ ແມ່ນສາມາດເຮັດໄດ້ດ້ວຍການໃຫ້ລາງວັນເປັນວັດຖຸສິ່ງຂອງເທົ່ານັ້ນ. ຖ້າຜູ້ໃຊ້ບໍລິການຕ້ອງການປ່ຽນລາງວັນທີ່ເປັນວັດຖຸມາເປັນບັດຕື່ມ ມູນຄ່າໂທ ແມ່ນສາມາດເຮັດໄດ້ໃນກໍລະນີລາງວັນດັ່ງກ່າວມີມູນຄ່າບໍ່ເກີນ 100 000 ກີບ, ແຕ່ບໍ່ສາມາດ ປ່ຽນເປັນເງິນສົດໄດ້. ຄ່າສິ້ນເປືອງໃນຂັ້ນຕອນດຳເນີນ ການ ການກວດສອບ ແລະ ຮັບລາງວັນ, ຜູ້ໃຫ້ບໍລິການ ໂທລະຄົມເປັນຜູ້ຮັບຜິດຊອບຈະບໍ່ໄດ້ຫັກຄ່າໃດໆຈາກຜູ້ໃຊ້ບໍລິການ.

**ມາດຕາ 15. ຮູບແບບສົ່ງເສີມການຂາຍປະເພດບໍລິການຜະລິດຕະພັນໃໝ່**

ຮູບແບບສົ່ງເສີມການຂາຍປະເພດບໍລິການຜະລິດຕະພັນໃໝ່ໃດໜຶ່ງ ແມ່ນສາມາດເຮັດໄດ້ ແລະ ໃຫ້ປະຕິບັດຕາມ ມາດຕາ 12 ຂອງຂໍ້ຕົກລົງສະບັບນີ້. ກຳນົດເວລາການຈັດສົ່ງເສີມການຂາຍດັ່ງກ່າວ ບໍ່ໃຫ້ເກີນສາມສິບວັນຕໍ່ປີ.

**ມາດຕາ 16. ການໂຄສະນາ ແລະ ກຳນົດເວລາການຈັດສົ່ງເສີມການຂາຍ**

ເນື້ອໃນການໂຄສະນາການຈັດສົ່ງເສີມການຂາຍໃນທຸກຮູບແບບຕ້ອງຖືກຕ້ອງ, ໂປ່ງໃສ, ຮັບປະກັນດ້ານຄຸນນະພາບຕາມມາດຕະຖານເຕັກນິກ ແລະ ສອດຄ່ອງກັບລະບຽບ ທີ່ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ກຳນົດອອກ. ຜູ້ໃຫ້ບໍລິການຕ້ອງ ເຜີຍແຜ່ໂຄສະນາຂໍ້ມູນໃຫ້ຜູ້ໃຊ້ບໍລິການຮັບຮູ້ ສິບຫ້າວັນກ່ອນການຈັດການສົ່ງເສີມການຂາຍແຕ່ລະຄັ້ງ.

ຜູ້ໃຫ້ບໍລິການ ຕ້ອງກຳນົດໄລຍະຫ່າງຂອງການຈັດສົ່ງເສີມການຂາຍແຕ່ລະຄັ້ງບໍ່ຕໍ່າກວ່າ ເຈັດວັນ ແລະ ກຳນົດເວລາຈັດສົ່ງເສີມການຂາຍລວມທັງໝົດບໍ່ເກີນ ເກົ້າສິບວັນ ຕໍ່ປີ ຕໍ່ໜຶ່ງຮູບແບບສົ່ງເສີມການຂາຍ.

ຜູ້ໃຫ້ບໍລິການຕ້ອງກຳນົດວິທີການລົງທະບຽນສະໝັກ, ການກວດກາ ແລະ ການຍົກເລີກການໃຊ້ບໍລິການຕາມຮູບແບບການຈັດສົ່ງເສີມການຂາຍເປັນລະບົບທີ່ຊັດເຈນ, ເຂົ້າໃຈງ່າຍ ແລະ ເຜີຍແຜ່ໃຫ້ແກ່ຜູ້ໃຊ້ບໍລິການຢ່າງທົ່ວເຖິງ.

ການຈັດສົ່ງເສີມການຂາຍໃນຮູບແບບອື່ນ ນອກຈາກທີ່ລະບຸໄວ້ໃນຂໍ້ຕົກລົງສະບັບນີ້ຜູ້ໃຫ້ບໍລິການຕ້ອງສະເໜີ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເພື່ອພິຈາລະນາອະນຸມັດ.

**ມາດຕາ 17. ເງື່ອນໄຂການຈັດສົ່ງເສີມການຂາຍ**

ໃນການສົ່ງເສີມການຂາຍ, ຜູ້ໃຫ້ບໍລິການ ຕ້ອງປະຕິບັດຕາມເງື່ອນໄຂ ດັ່ງລຸ່ມນີ້:

1. ປະຕິບັດຢ່າງສອດຄ່ອງກັບຫຼັກການສົ່ງເສີມການຂາຍທີ່ກຳນົດໄວ້ໃນ ຂໍ້ຕົກລົງສະບັບນີ້;
2. ມີແຜນການສົ່ງເສີມການຂາຍປະຈຳປີ ແລະ ປະຈຳງວດຢ່າງລະອຽດ;
3. ຮັບປະກັນຄວາມຖືກຕ້ອງທາງດ້ານລາຄາ, ປະລິມານ, ຄຸນນະພາບ ແລະ ຮູບແບບການບໍລິການທີ່ ກຳນົດໄວ້.
4. ມີໃບອະນຸຍາດດຳເນີນທຸລະກິດດ້ານໂທລະຄົມມະນາຄົມ ຢ່າງຖືກຕ້ອງ.

## ໝວດທີ V
## ລະບົບລາຍງານ ແລະ ການຕິດຕາມກວດກາ

**ມາດຕາ 18. ລະບົບລາຍງານ**

ທຸກຄັ້ງທີ່ຈະຈັດການສົ່ງເສີມການຂາຍຜູ້ໃຫ້ບໍລິການຕ້ອງລາຍງານ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ຮັບຮູ້ກ່ອນໄລຍະການລົງໂຄສະນາ ເພື່ອຕິດຕາມກວດກາໃນການຈັດຕັ້ງປະຕິບັດການສົ່ງເສີມການຂາຍໃຫ້ສອດຄ່ອງກັບຂໍ້ຕົກລົງສະບັບນີ້.

**ມາດຕາ 19. ການຕິດຕາມກວດກາ**

ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເປັນຜູ້ຮັບຜິດຊອບຕິດຕາມກວດກາ, ຮັບຄໍາຮ້ອງ ແລະ ແກ້ໄຂບັນຫາຕ່າງໆໃນການຈັດສົ່ງເສີມການຂາຍ, ການແຂ່ງຂັນ, ຄຸນນະພາບ, ອັດຕາຄ່າຄາໂທລະສັບ ແລະ ອິນເຕີເນັດທີ່ບໍ່ຖືກຕ້ອງ ຕາມຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

## ໝວດທີ VI

## ຂໍ້ຫ້າມ, ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 20. ຂໍ້ຫ້າມ**

ນອກຈາກຮູບແບບການສົ່ງເສີມການຂາຍທີ່ລະບຸໄວ້ໃນ ມາດຕາ 11, ຫ້າມຜູ້ໃຫ້ບໍລິການໂທລະຄົມມະນາຄົມມີພຶດຕິກໍາ ດັ່ງລຸ່ມນີ້:

1. ແຈກ, ແຖມລ້າ ໜ່ວຍໂທລະສັບຕັ້ງໂຕະ, ໜ່ວຍໂທລະສັບມືຖື, ຊິມຄາດ ແລະ ເລກໝາຍອິນເຕີເນັດຈິງ;
2. ແຈກແຖມ ຫຼື ໃຫ້ລາງວັນຜູ້ທີ່ບໍ່ລົງທະບຽນເລກໝາຍໂທລະສັບຢ່າງຖືກຕ້ອງ;
3. ໂຄສະນາການສົ່ງເສີມການຂາຍເກີນຄວາມເປັນຈິງ, ຊຶ່ງເປັນການຫຼອກລວງ, ເອົາປຽບຜູ້ໃຊ້ບໍລິການດ້ານຄຸນນະພາບ, ການນໍາໃຊ້ ອັດຕາຄ່າໂທລະສັບ ແລະ ອິນເຕີເນັດ.

**ມາດຕາ 21. ນະໂຍບາຍຕໍ່ຜູ້ທີ່ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນໆຕາມຄວາມເໝາະສົມ.

**ມາດຕາ 22. ມາດຕະການຕໍ່ຜູ້ທີ່ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມປະຕິບັດວິໄນ, ປັບໃໝ ຫຼື ດໍາເນີນຄະດີຕາມກໍລະນີເບົາ ຫຼື ໜັກຕາມລະບຽບກົດໝາຍ.

**ມາດຕາ 23. ມາດຕະການປັບໃໝ**

ຜູ້ໃຫ້ບໍລິການບໍລິການໂທລະຄົມມະນາຄົມ ທີ່ລະເມີດມາດຕາໃດໜຶ່ງຂອງຂໍ້ຕົກລົງສະບັບນີ້ ຈະຖືກປັບໃໝ ກໍ່ຕໍ່ເມືອໄດ້ມີການຢັ້ງຢືນຈາກຄະນະກໍາມະການຕິດຕາມກວດກາ ກະຊວງ ປທສ ແລະ ຖ້າເປັນຄະດີອາຍາກໍ່ຕ້ອງປະຕິບັດຕາມລະບຽບກົດໝາຍຂອງລັດ.

## ໝວດທີ VII
## ບົດບັນຍັດສຸດທ້າຍ

**ມາດຕາ 24. ການຈັດຕັ້ງປະຕິບັດ**

ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ມອບໃຫ້ກົມໂທລະຄົມມະນາຄົມ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້.

**ມາດຕາ 25. ຜົນສັກສິດ.**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ລົງລາຍເຊັນ ແລະ ພາຍຫຼັງ ໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ຂໍ້ຕົກລົງສະບັບນີ້ປ່ຽນແທນ ຂໍ້ຕົກລົງວ່າດ້ວຍ ອັດຕາຄ່າໂທລະສັບ, ສະບັບເລກທີ 993/ສນຍ.ອປທ, ລົງວັນທີ 16 ມິຖຸນາ 2011 ແລະ ແຈ້ງການ ກ່ຽວກັບການກຳນົດຫຼັກການລວມກ່ຽວກັບນະໂຍບາຍ ການຂາຍ ແລະ ຮູບແບບການເຮັດໂປຣໂມຊັນຕ່າງໆ, ສະບັບເລກທີ 1820/ປທສ.ຫກ, ລົງວັນທີ 13 ທັນວາ 2011.

ຂໍ້ຕົກລົງ ແລະ ລະບຽບການ ທີ່ຂັດກັບຂໍ້ຕົກລົງສະບັບນີ້ລ້ວນແຕ່ຖືກຍົກເລີກ.

**ລັດຖະມົນຕີ**

ກະຊວງໄປສະນີ ໂທລະຄົມມະນາຄົມ ແລະ ການສື່ສານ
ລັດຖະມົນຕີ

ດຣ. ຫັນສະໄໝ ກົມມະສິດ